**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເມືອງວັງວຽງ

ເລກທີ..002../ຈມ.ວວ

ວັງວຽງ, ວັນທີ.19 ມີນາ 2020

# ຄຳສັ່ງ

**ເຖິງ:** ບັນດາຫົວໜ້າຫ້ອງການ, ອົງການ, ກົມກອງ, ກຸ່ມບ້ານ, ນາຍບ້ານ, ຫົວໜ່ວຍທຸລະກິດ, ບໍລິສັດ ໂຮງແຮມ, ບ້ານພັກ, ຮ້ານອາຫານ, ຮ້ານກິນດື່ມ-ບັນເທີງ, ຮ້ານນວດ, ພໍ່ຄ້າຊາວຂາຍ ແລະ ພໍ່ແມ່ ປະຊາຊົນບັນດາເຜົ່າພາຍໃນເມືອງວັງວຽງ ແຂວງວຽງຈັນ.

**ເລື່ອງ:** ການປະຕິບັດມາດຕະການເລື່ອນ ຫຼື ໂຈະຊົ່ວຄາວການຈັດງານບຸນ ແລະ ງານຊຸມນຸມຕ່າງ ໆ ທີ່ ມີຜູ້ຄົນເຂົ້າຮ່ວມເປັນຈຳນວນຫຼາຍ ເພື່ອປ້ອງກັນພະຍາດອັກເສບປອດເຊື້ອຈຸລະໂລກສາຍພັນໃໝ່ ຫຼື ໄວຣັດໂຄວິດ 19 ( COVID-19 ).

- ອີງຕາມ ໜັງສືແຈ້ງການຫົວໜ້າກອງເລຂາສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງ ພະຍາດໂຄວິດ-19 ຂັ້ນສູນກາງສະບັບເລກທີ 005/ສພກ, ລົງວັນທີ 02 ມີນາ 2020.
- ອີງຕາມ ຄຳສັ່ງຂອງທ່ານເຈົ້າແຂວງແຂວງວຽງຈັນ ສະບັບເລກທີ 002/ຈຂ.ວຈ, ລົງວັນທີ 17 ມີນາ 2020.

ນັບແຕ່ຕົ້ນເດືອນທັນວາ 2019 ເປັນຕົ້ນມາ ພະຍາດອັກເສບປອດເຊື້ອຈຸລະໂລກສາຍພັນໃໝ່ ຫຼື ໂຄວິດ-19 ( COVID-19 ) ໄດ້ລະບາດຢູ່ ສປ ຈີນ ແລະ ໄດ້ແຜ່ລາມໄປຫຼາຍປະເທດໃນທົ່ວໂລກ ມີຍອດຜູ້ຕິດເຊື້ອ ແລະ ມີຜູ້ເສຍຊີວິດໄດ້ເພີ່ມຂຶ້ນໃນແຕ່ລະວັນ, ພະຍາດດັ່ງກ່າວເປັນໄວຣັດທີ່ຮ້າຍແຮງ ແລະ ແຜ່ລະບາດຢ່າງໄວວາອອກສູ່ວົງກ້ວາງ, ເຖິງວ່າປະເທດລາວເຮົາຍັງບໍ່ທັນມີຜູ້ຕິດເຊື້ອດັ່ງກ່າວກໍ່ຕາມ ແຕ່ ສປປ ລາວ ກໍ່ຄືແຂວງວຽງຈັນ ເວົ້າລວມ ເວົ້າສະເພາະເມືອງວັງວຽງຂອງພວກເຮົາເຊິ່ງເປັນເມືອງໜຶ່ງທີ່ມີທີ່ຕັ້ງເປັນ ເສັ້ນທາງເຊື່ອມຕໍ່ບັນດາເມືອງ ແລະ ແຂວງ, ເຊິ່ງເປັນເມືອງທີ່ມີແຫຼ່ງທ່ອງທ່ຽວຈຳນວນຫຼາຍ ແລະ ມີຊື່ສຽງ ເຊິ່ງມີຄວາມສ່ຽງສູງທີ່ຈະປະສົບພະຍາດດັ່ງກ່າວຫຼາຍ ແລະ ອີກດ້ານໜຶ່ງເຕັກນິກວິທະຍາສາດຍັງບໍ່ທັນສະໄໝ ໂຮງໝໍ, ສຸກສາລາກໍ່ຍັງບໍ່ທັນມີຄວາມຮັບປະກັນໃນການບໍລິການປິ່ນປົວພະຍາດດັ່ງກ່າວ.

ເພື່ອເປັນການຮັບປະກັນການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ( COVID-19 ) ຢູ່ພາຍໃນເມືອງວັງວຽງໃຫ້ມີຄວາມສະຫງົບປອດໄພ.

**ເຈົ້າເມືອງ ອອກຄຳສັ່ງ:**

1. ໃຫ້ທຸກພາກສ່ວນທັງພາກລັດ, ເອກະຊົນ, ສ່ວນບຸກຄົນ ເລື່ອນ ຫຼື ໂຈະຊົ່ວຄາວກ່ຽວກັບການຈັດກິດຈະກຳຕ່າງ ໆ ທີ່ມີມວນຊົນເຂົ້າຮ່ວມເປັນຈຳນວນຫຼາຍ ໂດຍສະເພາະແມ່ນ: ການປະຊຸມທາງການ, ງານບຸນ ປະເພນີ, ງານດອງ, ງານລ້ຽງ, ງານຕະຫຼາດນັດ, ການແຂ່ງຂັນກິລາ ແລະ ງານອື່ນ ໆ ທີ່ຢູ່ໃນຊ່ວງໄລຍະຕິດຕາມ, ເຝົ້າລະວັງການແຜ່ລະບາດຂອງພະຍາດໂຄວິດ-19 ຈົນກ່ວາສະພາບການລະບາດຈະສະຫງົບລົງ ແລະ ສາມາດຄວບຄຸມໄດ້.

2. ໃຫ້ບັນດາເຈົ້າຂອງກິດຈະການບໍລິການຕ່າງ ໆ ເຊັ່ນ:ໂຮງແຮມ, ບ້ານພັກ, ຮ້ານອາຫານ, ຮ້ານບັນເທີງ, ສະຖານທີ່ທ່ອງທ່ຽວຕ່າງ ໆ ຕ້ອງໄດ້ກະກຽມໃຫ້ມີພະນັກງານກວດກາຜູ້ເຂົ້າມາພັກເຊົາ ຫຼື ເຂົ້າມາບໍລິການໃນຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງເຄັ່ງຄັດ , ຖ້າຫາກພົບກໍລະນີຜິດປົກກະຕິ ຕ້ອງໄດ້ລາຍງານໃຫ້ຫ້ອງການສາທາລະນະສຸກເມືອງ ຫຼື ພະແນກສາທາລະນະສຸກແຂວງຢ່າງຮີບດ່ວນທີ່ສຸດ.
3. ໃຫ້ບັນດາບໍລິສັດ, ຫົວໜ່ວຍທຸລະກິດ ທີ່ດໍາເນີນກິດຈະການຕ່າງ ໆ ເຊິ່ງລວມທັງຄົນລາວ ແລະ ຄົນຕ່າງປະເທດ ຕ້ອງໄດ້ກະກຽມສະຖານທີ່ກັກກັ້ນແຮງງານທີ່ເຂົ້າມາໃໝ່ ໂດຍສະເພາະແຮງງານທີ່ມາຈາກປະເທດທີ່ມີການແຜ່ລະບາດຂອງເຊື້ອພະຍາດ COVID-19 ແລະ ໃຫ້ຮ່ວມມືກັບເຈົ້າໜ້າທີ່ປະຕິບັດການກວດວັດແທກອຸນຫະພູມຮ່າງກາຍ ແລະ ຂັ້ນຕອນຕ່າງ ໆ ຂອງວິຊາການແພດຢ່າງເຂັ້ມງວດ, ຖ້າບຸກຄົນໃດທີ່ມີອາການສົງໃສ ຫຼື ຖືກກັ່ນກອງວ່າມີອາການໄຂ້ ແລະ ເຂົ້າກັບນິຍາມຂອງພະຍາດ COVID-19 ເຊັ່ນ: ມີອາການໄຂ້, ໄອ, ເຈັບຄໍ ຫຼື ຫາຍໃຈຍາກ ແລະ ເດີນທາງກັບມາຈາກປະເທດທີ່ມີລາຍງານພະຍາດ COVID-19 ແມ່ນຈະໄດ້ນໍາສົ່ງເຂົ້າໂຮງໝໍຢ່າງຮີບດ່ວນ ເພື່ອຕິດຕາມ ແລະ ກວດຫາເຊື້ອພະຍາດດັ່ງກ່າວ.
4. ໃຫ້ບັນດາຄູອາຈານ, ໂຮງຮຽນຕ່າງ ໆ ພາຍໃນເມືອງເປັນເຈົ້າການຕິດຕາມກວດການັກຮຽນຂອງຕົນຢ່າງໃກ້ຊິດ, ຖ້າໂຮງຮຽນໃດຫາກມີຜູ້ທີ່ມີອາການສົງໃສເຂົ້າກັບນິຍາມຂອງພະຍາດ COVID-19 ຫຼື ໂຮງຮຽນໃດມີການລະບາດເກີດຂຶ້ນຕ້ອງໄດ້ສັ່ງໂຈະການຮຽນເປັນການຊົ່ວຄາວຈົນກ່ວາສະພາບຈະສະຫງົບຈຶ່ງເຂົ້າຮຽນຕໍ່ ( ເວົ້າສະເພາະໂຮງຮຽນມັດທະຍົມຕອນຕົ້ນຂຶ້ນໄປ ເນື່ອງວ່າຈາກປະຈຸບັນນີ້ແມ່ນໄດ້ສັ່ງໂຈະໂຮງຮຽນອະນຸບານ ແລະ ໂຮງຮຽນປະຖົມແລ້ວ ).
5. ໃຫ້ບັນດາພະນັກງານ-ລັດຖະກອນ, ທະຫານ-ຕໍາຫຼວດ, ນັກທຸລະກິດ, ພໍ່ຄ້າຊາວຂາຍ ແລະ ພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນເມືອງວັງວຽງ ຈົ່ງພ້ອມກັນຢຸດຕິຊົ່ວຄາວການພົບພັນແບບໃກ້ຊິດຕິດແທດ ເຊັ່ນ: ການຊຸມແຊວ, ຫຼິ້ນກິນຟູມເຟືອຍຕາມຫ້າງຮ້ານ ຫຼື ສະຖານທີ່ບັນເທີງແບບເປັນກຸ່ມກ້ອນ, ຫຼີກລ້ຽງການສໍາພັດເຊັ່ນ: ການຈັບມື ຫຼື ກອດກັນ ໃຫ້ໃຊ້ແບບການນົບ ຫຼື ຄໍານັບກັນກໍ່ໄດ້.
6. ມອບໃຫ້ເຈົ້າໜ້າທີ່ຫ້ອງການສາທາລະນະສຸກເມືອງ ເປັນເຈົ້າການໃນການປະສານສົມທົບກັບບັນດາຫ້ອງການທີ່ກ່ຽວຂ້ອງ ຈົ່ງເພີ່ມທະວີໃນການຕິດຕາມກວດກາ, ເຝົ້າລະວັງ, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂຢ່າງເຂັ້ມງວດ. ຖ້າພົບເຫັນກໍລະນີທີ່ສົງໃສ ຫຼື ເປັນພະຍາດ COVID-19 ຕ້ອງໄດ້ເອົາໃຈໃສ່ແກ້ໄຂໃຫ້ທັນ ແລະ ລາຍງານຕໍ່ຂັ້ນເທິງເພື່ອຮັບຊາບຢ່າງຮີບດ່ວນ.
7. ມອບໃຫ້ຫ້ອງການ ຖະແຫຼງຂ່າວ ວັດທະນະທໍາ ແລະ ທ່ອງທ່ຽວ ເປັນເຈົ້າການໃນການຈັດຕັ້ງເຜີຍແຜ່ຂະຫຍາຍຄໍາສັ່ງສະບັບນີ້ ໂດຍເປັນການອອກຂ່າວທາງວິທະຍຸ, ໂທລະໂຄ່ງ ຫຼື ສື່ອອນລາຍຕໍ່ສື່ມວນຊົນຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ.
8. ຫ້ອງການສາທາລະນະສຸກເມືອງ, ຫົວໜ້າກຸ່ມບ້ານ, ນາຍບ້ານ ຈົ່ງພ້ອມກັນຈັດຕັ້ງເຜີຍແຜ່ຂະຫຍາຍຄໍາສັ່ງສະບັບນີ້ລົງສູ່ຮາກຖານປະຊາຊົນ ແລະ ພາກສ່ວນຕ່າງ ໆ ເພື່ອຈັດຕັ້ງປະຕິບັດຢ່າງເຂັ້ມງວດ.
9. ຖ້າພາກສ່ວນໃດຫາກຝ່າຝືນບໍ່ຈັດຕັ້ງປະຕິບັດຈະຖືກສຶກສາອົບຮົມ, ກ່າວເຕືອນ ຫຼື ປະຕິບັດລະບຽບກົດໝາຍ ແລະ ພ້ອມທັງຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນທັງໝົດ.
10. ຜ່ານການຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ໃຫ້ສະຫຼຸບ, ສ່ອງແສງລາຍງານຕໍ່ການນໍາເມືອງໃຫ້ເປັນປົກກະຕິເພື່ອມີທິດຊີ້ນໍາ, ວາງມາດຕະການແກ້ໄຂຢ່າງທັນການ.

ດັ່ງນັ້ນ, ຈຶ່ງອອກຄຳສັ່ງສະບັບນີ້ມາຍັງບັນດາທ່ານເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຄຳສັ່ງສະບັບນີ້ຢ່າງເຂັ້ມງວດ ນັບແຕ່ວັນລົງລາຍເຊັນນີ້ເປັນຕົ້ນໄປຈົນກ່ວາຈະມີແຈ້ງການເພີ່ມເຕີມ.

**ເຈົ້າເມືອງ**

ສຸວຽງທອງ ວົງຈຳປາ

**ບ່ອນສົ່ງ:**

- ບັນດາຫ້ອງການທົ່ວເມືອງ 1 ສະບັບ.
- ກຸ່ມບ້ານ, ນາຍບ້ານ 1 ສະບັບ.
- ຫົວໜ່ວຍທຸລະກິດ 1 ສະບັບ.
- ພາກສ່ວນທີ່ກ່ຽວຂ້ອງ 1 ສະບັບ.
- ສຳເນົາ 1 ສະບັບ.